ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ອົງການຈັດຕັ້ງມະຫາຊົນ ທຫລ ມອບເງິນ 5 ລ້ານກີບ ໃຫ້ຊາວໜຸ່ມກອງທັບ






ໃນວັນທີ 23 ມີນາ 2021 ນີ້, ສາມອົງການຈັດຕັ້ງມະຫາຊົນຂອງ ທະນາຄານແຫ່ງ ສປປ ລາວ (ທຫລ) ເຊິ່ງນຳໂດຍ ສະຫາຍນາງ ນະຄອນສີ ມະໂນທຳ ຮອງເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ ພ້ອມດ້ວຍຄະນະ ໄດ້ມອບວັດຖຸປັດໃຈຈຳນວນໜຶ່ງທີ່ໄດ້ມາຈາກການປະກອບສ່ວນຂອງສາມອົງການຈັດຕັ້ງມະຫາຊົນຂອງ ທຫລ ເພື່ອມອບໃຫ້ແກ່ຫ້ອງການຊາວໜຸ່ມກອງທັບ ເພື່ອມອບຕໍ່ໃຫ້ແກ່ບັນດານາຍ ແລະ ພົນທະຫານທີ່ເຮັດໜ້າທີ່ປ້ອງກັນຊາດປ້ອງກັນຄວາມສະຫງົບຢູ່ທ້ອງຖິ່ນ-ຮາກຖານ; ໂດຍແມ່ນສະຫາຍພັທ ສຸວັນນີ ດວງປະເສີດ ຮອງຫົວໜ້າຫ້ອງການຊາວໜຸ່ມກະຊວງປ້ອງກັນປະເທດພ້ອມຄະນະໃຫ້ກຽດຕ້ອນຮັບໃນພິທີດັ່ງກ່າວ.

ໃນການມອບວັດຖຸປັດໃຈໃນຄັ້ງນີ້, ກໍ່ເພື່ອເປັນການຮັດແໜ້ນຄວາມສາມັກຄີທີ່ເປັນມູນເຊື້ອອັນດີງາມລະຫວ່າງອົງການຈັດຕັ້ງທະນາຄານກັບກອງທັບປະຊາຊົນລາວ ແລະ ທັງເປັນການສະແດງຄວາມຮູ້ບຸນຄຸນຕໍ່ກັບນາຍ ແລະ ພົນທະຫານຂອງກອງທັບປະຊາຊົນລາວ ທີ່ເຮັດໜ້າທີ່ປົກປັກຮັກສາປະເທດຊາດ, ພ້ອມດຽວກັນນີ້ທາງອົງການຈັດຕັ້ງ ທຫລ ໄດ້ປະກອບສ່ວນຊຸກຍູ້ວັດຖຸປັດໃຈຈຳນວນ 5,000,000 ກີບ; ເປັນເຄື່ອງອຸປະໂພກ-ບໍລິໂພກ ເພື່ອມອບໃຫ້ພະນັກງານ-ນັກຮົບ ທີ່ພວມປະຕິບັດໜ້າທີ່ຢູ່ເຂດທຸລະກັນດານ, ເຂດຊາຍແດນ, ຫ່າງໄກສອກຫຼີກ ທີ່ຂຶ້ນກັບກອງພົນທະຫານຮາບທີ 01 ແລະ ທະຫານແຂວງໄຊສົມບູນ.

**# ຂ່າວ-ພາບ: ທ ສົມພົດ ທຳມະວົງ**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ